ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---===oo(000)oo===---

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 1119 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ... 08 JUN 2009

# ແຈ້ງການ

ເຖິງ: ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ໃນທົ່ວປະເທດ

ເລື່ອງ: ການຈັດຕັ້ງປະຕິບັດການນຳເຂົ້າ ແລະ ສົ່ງອອກ ສຳລັບສິນຄ້າ ຂອງ ສປປ ລາວ ແລະ ສສ ຫວຽດນາມ ທີ່ໄດ້ບູລິມະສິດອັດຕາພາສີຂາເຂົ້າຊຶ່ງກັນ ແລະກັນ ຕາມຂໍ້ຕົກລົງສະບັບເຊັນກັນໃໝ່ລົງວັນທີ 17 ມັງກອນ 2009.

- ອີງຕາມແຈ້ງການ ສະບັບເລກທີ 1588/ອຄ.ກຂອ, ລົງວັນທີ 23/09/2008 ກ່ຽວກັບ ການຈັດຕັ້ງປະຕິບັດການນຳເຂົ້າ ແລະ ສົ່ງອອກສຳລັບສິນຄ້າຂອງ ສປປ ລາວ ແລະ ສສ ຫວຽດນາມ ທີ່ໄດ້ບູລິມະສິດອັດຕາພາສີຂາເຂົ້າ ຊຶ່ງກັນ ແລະກັນ.
- ອີງຕາມຂໍ້ຕົກລົງ ລະຫວ່າງກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ແລະ ສສ ຫວຽດນາມ ສະບັບລົງວັນທີ 17 ມັງກອນ 2009 ວ່າດ້ວຍ ການໃຫ້ບູລິມະສິດອັດຕາພາສີຂາເຂົ້າ ຊຶ່ງກັນແລະກັນ.
- ອີງຕາມແຈ້ງການຂອງຄະນະເລຂາທິການລັດຖະບານ ສະບັບເລກທີ 826/ຄລບ, ລົງວັນທີ 20/05/2009 ກ່ຽວກັບການເຫັນດີຮັບຮອງເອົາເນື້ອໃນຂອງຂໍ້ຕົກລົງວ່າດ້ວຍບູລິມະສິດອັດຕາພາສີນຳເຂົ້າ-ສົ່ງອອກສິນຄ້າ ລາວ-ຫວຽດນາມ ສຳລັບປີ2009 ແລະ 2010.

ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດ ແຈ້ງການ ມາຍັງທ່ານ ກ່ຽວກັບ ການຈັດຕັ້ງປະຕິບັດການນຳເຂົ້າ ແລະ ສົ່ງອອກ ສຳລັບສິນຄ້າຂອງ ສປປ ລາວ ແລະ ສສ ຫວຽດນາມ ທີ່ໄດ້ບູລິມະສິດອັດຕາພາສີຂາເຂົ້າຊຶ່ງກັນແລະກັນ ດັ່ງຕໍ່ໄປນີ້:

1. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແນະນຳ ແລະ ເຜີຍແຜ່ການຈັດຕັ້ງປະຕິບັດການນຳເຂົ້າ ແລະ ສົ່ງອອກ ສຳລັບສິນຄ້າຂອງ ສປປ ລາວ ແລະ ສສ ຫວຽດນາມ ທີ່ໄດ້ບູລິມະສິດອັດຕາພາສີຂາເຂົ້າຊຶ່ງກັນແລະກັນຕາມແຈ້ງການສະບັບນີ້ໃຫ້ແກ່ຫົວໜ່ວຍທຸລະກິດຊາບ. ສ່ວນລະບຽບການ ແລະ ຂັ້ນຕອນລະອຽດໃນການຈັດຕັ້ງປະຕິບັດຕໍ່ສິນຄ້າທີ່ໄດ້ບູລິມະສິດ ແມ່ນ

ຢັ້ງຢືນໃສ່ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການຄ້າສະບັບເລກທີ 0663/ກຄ.ຕປທ, ລົງວັນທີ 16 ກໍລະກົດ 2004 ວ່າດ້ວຍການປະກາດໃຊ້ລະບຽບແຫຼ່ງກຳເນີດສິນຄ້າ Form S ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ.

ສຳລັບການຄິດໄລ່ອັດຕາສ່ວນບັນຈຸພາຍໃນ (Local content ) ຂອງສິນຄ້າທີ່ມີແຫຼ່ງກຳເນີດຈາກ ສປປ ລາວ ບໍ່ຫຼຸດ 30% ຂອງລາຄາ FOB ແມ່ນນຳໃຊ້ສະເພາະລາຍການສິນຄ້າທີ່ນອນໃນສາລະບານ ເລກທີ 3 ຂອງຂໍ້ຕົກລົງສະບັບລົງວັນທີ 17 ມັງກອນ 2008 ຄັດຕິດມາພ້ອມນີ້ ຊຶ່ງມີຜົນສັກສິດນຳໃຊ້ຈົນຮອດເດືອນ ທັນວາ ປີ 2010. ສ່ວນລາຍການສິນຄ້າທີ່ບໍ່ນອນໃນສາລະບານເລກທີ 3, ການຄິດໄລ່ Local content ແມ່ນໃຫ້ປະຕິບັດຕາມແຈ້ງການ 0663 ທີ່ກຳນົດ Local content ຂອງສິນຄ້າທົ່ວໄປ ແມ່ນບໍ່ໃຫ້ຫຼຸດ 40% ຂອງລາຄາ FOB.

2. ສຳລັບດ່ານຊາຍແດນທີ່ໄດ້ຮັບອະນຸຍາດໃຫ້ສົ່ງອອກ ຫຼືນຳເຂົ້າ ສິນຄ້າ ທີ່ໄດ້ຮັບບູລິມະສິດພາຍໃຕ້ຟອມ S ແມ່ນໃຫ້ປະຕິບັດຕາມຂໍ້ຕົກລົງສະບັບທີ່ສອງຝ່າຍເຊັນກັນໃນຄັ້ງວັນທີ 28/7/2005. (ຄັດຕິດມາພ້ອມນີ້)

3. ວິທີຈັດຕັ້ງປະຕິບັດ

ກ. ສຳລັບສິນຄ້າທົ່ວໄປ (ສິນຄ້າທີ່ນອນໃນສາລະບານເລກ 1a ແລະ ສິນຄ້າທີ່ບໍ່ນອນໃນສາລະບານໃດໆ) ແມ່ນອະນຸຍາດໃຫ້ບັນດາພະແນກອຸດສາຫະກຳ ແລະ ການຄ້າແຂວງໃນທົ່ວປະເທດ ອອກຟອມ S ເພື່ອຢັ້ງຢືນແຫຼ່ງກຳເນີດສິນຄ້າໄດ້. ຖ້າແຂວງໃດຍັງບໍ່ທັນສະດວກໃນການອອກອະນຸຍາດຟອມ S ກໍ່ໃຫ້ມາອອກຢູ່ກະຊວງ ອຸດສາຫະກຳ ແລະ ການຄ້າ( ກົມການນຳເຂົ້າ ແລະ ສົ່ງອອກ) ກ່ອນ.

ຂ. ສຳລັບ 2 ລາຍການສິນຄ້າກະສິກຳທີ່ມີໂກຕ້າ ຄື: ເຂົ້າກົນ ແລະ ໃບຢາສູບນັ້ນແມ່ນມອບໃຫ້ ບັນດາພະແນກອຸດສາຫະກຳ ແລະ ການຄ້າແຂວງ ມີສິດອອກ ຟອມ S ໄດ້.

ຄ. ບັນດາພະແນກ ອຸດສາຫະກຳ ແລະ ການຄ້າແຂວງ ຕ້ອງສະຫຼຸບສັງລວມສະຖິຕິການອອກຟອມ S ແລ້ວລາຍງານມາໃຫ້ກະຊວງ ທຸກໆເດືອນ ໂດຍຊ້າສຸດບໍ່ໃຫ້ກາຍ ວັນທີ 10 ຂອງເດືອນຖັດໄປ (ຕົວຢ່າງ ການອອກອະນຸຍາດຂອງເດືອນ 1 ໃຫ້ລາຍງານ ຊ້າສຸດບໍ່ກາຍວັນທີ 10 ຂອງເດືອນ 2).

ງ. ທຸກໆເດືອນ 8 ຂອງແຕ່ລະປີ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ສະຫຼຸບລາຍງານສະພາບການຈັດຕັ້ງປະຕິບັດການອອກຟອມ S ມາໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ.

ຈ. ໃຫ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງພາຍໃນແຂວງໃນການກວດກາຄຸ້ມຄອງຢ່າງເຂັ້ມງວດ ເພື່ອຫຼີກລ້ຽງການສົ່ງອອກສິນຄ້າທີ່ບໍ່ແມ່ນແຫຼ່ງກຳເນີດຂອງ ສປປ ລາວ.

ສ. ໃນໄລຍະການຈັດຕັ້ງປະຕິບັດຕົວຈິງ ຖ້າມີບັນຫາຫຍຸ້ງຍາກແນວໃດ ໃຫ້ລາຍງານຫາກະຊວງອຸດສາຫະກຳ ແລະ ການຄ້າ ຊາບຕາມເວລາທີ່ເໝາະສົມ ເພື່ອຈະໄດ້ຫາວິທີແກ້ໄຂໃຫ້ທັນການ.

ແຈ້ງການສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ມີປະສິດທິຜົນ.

ລັດຖະມົນຕີວ່າການ,

ດຣ. ນາມ ວິຍະເກດ

ເອກະສານຄັດຕິດມາພ້ອມນີ້:

1. ຂໍ້ຕົກລົງສະບັບເຊັ່ນກັນຄັ້ງວັນທີ 28/7/2005
2. ຂໍ້ຕົກລົງສະບັບເຊັ່ນກັນຄັ້ງວັນທີ 19/03/2008
3. ຂໍ້ຕົກລົງສະບັບເຊັ່ນກັນຄັ້ງວັນທີ 17/01/2009
4. ແຈ້ງການສະບັບເລກທີ 826/ຄລບຄັ້ງວັນທີ 20/05/2009

ບ່ອນນຳສົ່ງ:

- ຫົວໜ້າຫ້ອງການກະຊວງ ເພື່ອຮັບຊາບ
- ກົມນະໂຍບາຍການຄ້າຕ່າງປະເທດ ເພື່ອຮັບຊາບ
- ກົມການຄ້າພາຍໃນ ເພື່ອຮັບຊາບ
- ກົມພາສີ ກະຊວງການເງິນ ເພື່ອເພື່ອຊາບ